# ທະນາຄານສະເພາະກິດລາວ-ຫວຽດນາມສືບຕໍ່ພົວພັນ-ຮ່ວມມືສູ່ລວງເລິກ





ໃນວັນທີ 21 ພະຈິກນີ້ ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ທະນາຄານສະເພາະກິດຂອງສອງປະເທດລາວ ແລະ ຫວຽດນາມ ໂດຍມີທະນາຄານນະໂຍບາຍແຫ່ງ ສປປ ລາວ ແລະ ທະນາຄານນະໂຍບາຍ-ສັງຄົມແຫ່ງ ສສ ຫວຽດນາມ ໄດ້ຈັດຕັ້ງກອງປະຊຸມປຶກສາຫາລື ແລະ ແລກປ່ຽນບົດຮຽນລະຫວ່າງສອງທະນາຄານ ໂດຍການເປັນປະທານຮ່ວມຂອງທ່ານ ບົວລອງ ໄຊຍະວົງ ຜູ້ອຳນວຍການໃຫຍ່ທະນາຄານນະໂຍບາຍ ສປປ ລາວ ແລະ ທ່ານ ເຢືອງຽງດຖັງ ຜູ້ອຳນວຍການໃຫຍ່ທະນາຄານນະໂຍບາຍ-ສັງຄົມ ສສ ຫວຽດນາມ ແລະ ກໍມີການເຂົ້າຮ່ວມຂອງບັນດາຄະນະນຳທະນາຄານຂອງສອງປະເທດ.

ໃນໂອກາດດັ່ງກ່າວທັງຝ່າຍລາວ ແລະ ຫວຽດນາມ ກໍໄດ້ສະເໜີສະພາບຈຸດພິເສດ ແລະ ການເຄື່ອນໄຫວນັບທັງບົດຮຽນດ້ານດີ - ຂໍ້ຄົງຄ້າງ ແລະ ວິທີການຈັດຕັ້ງປະຕິບັດໃນທິດທາງຕໍ່ໜ້າໃນດ້ານທະນາຄານໃຫ້ກັນຊາບ ໂດຍສະເພາະທາງຝ່າຍຫວຽດນາມ ເຊິ່ງທະນາຄານນະໂຍບາຍແມ່ນມີບົດບາດສຳຄັນໃນການຈັດຕັ້ງປະຕິບັດການນຳໃຊ້ແຫຼ່ງທຶນນະໂຍບາຍຕໍ່ຄອບຄົວທຸກຍາກ-ບ້ານ ແລະ ເມືອງທຸກຍາກໃນຂອບເຂດທົ່ວປະເທດ, ນອກນີ້ຍັງໄດ້ສະເໜີເຖິງບົດຮຽນໃນການໃຫ້ສິນເຊື່ອແກ່ການສຶກສາ, ການສ້າງວຽກເຮັດງານທຳໃນຊຸມຊົນ, ການນຳໃຊ້ແຫຼ່ງທຶນເພື່ອປະກອບໃນການໃຊ້ຈ່າຍການອອກແຮງງານໃນຕ່າງປະເທດຂອງຊາວຫວຽດນາມ ແລະ ການນຳໃຊ້ແຫຼ່ງທຶນຕ່າງໆໃຫ້ເປັນປະໂຫຍດສູງສຸດແກ່ສັງຄົມ.

ໃນໄລຍະຕໍ່ມາຄະນະຜູ້ແທນທະນາຄານນະໂຍບາຍ-ສັງຄົມຫວຽດນາມແລະການນຳທະນາຄານນະໂຍບາຍຂອງລາວ ກໍໄດ້ເຂົ້າຮ່ວມເຊັນບົດບັນທຶກຊ່ວຍຈຳການພົວພັນ - ຮ່ວມມືເຂົ້າສູ່ລວງເລິກ, ທະນາຄານນະໂຍບາຍຂອງສອງປະເທດ ເຊິ່ງເປັນທະນາຄານພິເສດທີ່ລັດຖະບານສ້າງຂຶ້ນເພື່ອແກ້ໄຂບັນຫາຄວາມທຸກຍາກ ແລະ ແກ້ໄຂບັນຫາສັງຄົມ ເຊິ່ງຝ່າຍລາວນຳໂດຍທ່ານ ບົວລອງ ໄຊຍະວົງ ຜູ້ອຳນວຍການໃຫຍ່ທະນາຄານນະໂຍບາຍ ແລະ ຝ່າຍຫວຽດນາມ ນຳໂດຍທ່ານ ເຢືອງຽງດຖັງ ຜູ້ອຳນວຍການໃຫຍ່ທະນາຄານນະໂຍບາຍ-ສັງຄົມ ໂດຍຊ້ອງໜ້າພະນັກງານຂັ້ນນຳຂອງທະນາຄານນະໂຍບາຍຂອງສອງປະເທດ ເຊິ່ງບົດບັນທຶກຊ່ວຍຈຳດັ່ງກ່າວທັງສອງຝ່າຍຍັງໄດ້ຢືນຢັນສືບຕໍ່ຮ່ວມມື, ແລກປ່ຽນບົດຮຽນ-ປະສົບການໃນຮູບແບບການຈັດຕັ້ງວຽກງານ, ວຽກງານສິນເຊື່ອ, ແຫຼ່ງທຶນ, ການສ້າງບຸກຄະລາກອນ, ວຽກງານເຕັກໂນໂລຊີຂໍ້ມູນຂ່າວສານ, ວຽກງານກວດກາ-ກວດສອບພາຍໃນ ເຊິ່ງໃນປີ 2012 ແລະ 2013 ຝ່າຍຫວຽດນາມ ເຫັນດີໃຫ້ການຊ່ວຍເຫຼືອໃນດ້ານການພັດທະນາໄອຊີທີທັນເປັນທັນສະໄໝ,ສ້າງ-ນຳໃຊ້ໂປຼແກຼມໃສ່ວຽກງານທະນາຄານ ແລະ ຍົກລະດັບການພົວພັນ-ຮ່ວມມືຂັ້ນສາຂາກັບສາຂາຂອງທັງສອງຝ່າຍ,ພ້ອມນີ້ຝ່າຍຫວຽດນາມຈະຈັດຕັ້ງການຢ້ຽມຢາມທັດສະນະສຶກສາ ແລະ ຄົ້ນຄວ້າຕົວຈິງດ້ານການເຄື່ອນໄຫວວຽກງານຂອງທະນາຄານນະໂຍບາຍ-ສັງຄົມ ຫວຽດນາມ ແລະ ສຶກສາວິເຄາະສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງຢູ່ຫວຽດນາມໃຫ້ແກ່ທະນາຄານນະໂຍບາຍຂອງລາວ.